ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ເຂົ້າຮ່ວມງານສຳມະນາ "ບໍລິສັດຈົດທະບຽນພົບປະຜູ້ລົງທຶນ ປະຈຳ 6 ເດືອນຕົ້ນປີ 2026".

ໃນຕອນບ່າຍ ວັນພຸດ ທີ 23 ກັນຍາ 2026 ທີ່ຜ່ານມາ, ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ເຂົ້າຮ່ວມງານສຳມະນາ ທີ່ ຕະຫຼາດຫຼັກຊັບລາວ ພາຍໃຕ້ຫົວຂໍ້ "ບໍລິສັດຈົດທະບຽນພົບປະຜູ້ລົງທຶນ" ຄັ້ງທີ 2 ປະຈຳປີ 2026, ຖ່າຍທອດສົດ ໃຫ້ຊົມກັນທາງ Facebook Page: Lao Securities Exchange.

ໃນໂອກາດດັ່ງກ່າວ, ທ່ານ ພັນໂນລາ ສຸຄະບັນດິດ ຮອງຜູ້ອຳນວຍການໃຫຍ່ ແລະ ຜູ້ອຳນວຍການໃຫຍ່ຝ່າຍການເງິນ ຂຶ້ນນຳສະເໜີກ່ຽວກັບຜົນການເຄື່ອນໄຫວທຸລະກິດປະຈຳ 6 ເດືອນ ຕົ້ນປີ 2026 ໃຫ້ແກ່ນັກລົງທຶນ, ສື່ມວນຊົນ ແລະ ຜູ້ສົນໃຈ ໄດ້ຮັບຟັງ ຂໍ້ມູນບໍລິສັດ, ຜົນປະກອບການທີ່ຜ່ານມາ ແລະ ແຜນທິດທາງດຳເນີນທຸລະກິດຂອງບໍລິສັດໃນ 6 ເດືອນທ້າຍປີຕໍ່ໜ້າ ແລະ ໄດ້ມີກິດຈະກຳຖາມ-ຕອບຢ່າງກົງໄປກົງມາ ເຊິ່ງຖືວ່າເປັນສ່ວນໜຶ່ງຂອງກິດຈະກຳທີ່ດີເພື່ອນັກລົງທຶນໄດ້ຮັບຂໍ້ມູນຂ່າວສານຢ່າງເລິກເຊິ່ງ ແລະ ດຶງດູດນັກລົງທຶນໃໝ່ໆ.

ງານສຳມະນາໃນຄັ້ງນີ້ບໍ່ພຽງແຕ່ເປັນເວທີໃຫ້ແກ່ນັກລົງທຶນ ແລະ ສື່ມວນຊົນ ໄດ້ແລກປ່ຽນຂໍ້ມູນ ແລະ ຖາມ-ຕອບ ຂໍ້ຂ້ອງໃຈກ່ຽວກັບການດຳເນີນທຸລະກິດຂອງບໍລິສັດເທົ່ານັ້ນ ແຕ່ຍັງເປັນການສົ່ງເສີມໃຫ້ກິດຈະກຳຊື້-ຂາຍຮຸ້ນ ໃນຕະຫຼາດຫຼັກຊັບລາວອີກດ້ວຍ.

